ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

***********************

ກະຊວງສາທາລະນະສຸກ

ຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ນະຄອນຫຼວງວຽງຈັນ, ວັນທີ 19 MAR 2019

**ບົດລາຍງານການລົງຕິດຕາມວຽກງານ**

**ທີມງານລົງຕິດຕາມກວດກາ**

**ແຂວງຫຼວງນໍ້າທາ, ວັນທີ 17-23 ກຸມພາ 2019**

## I. ພາກທົ່ວໄປ

ເພື່ອປະຕິບັດຕາມແຜນການທີ່ໄດ້ວາງໄວ້, ຄະນະກຳມະການຕິດຕາມກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ແມ່ນຈະໄດ້ລົງໄປຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານໂຄງການກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນສຸກສາລາ ປີລະສອງຄັ້ງ. ໃນຄັ້ງນີ້ ແມ່ນໄດ້ລົງໄປຕິດຕາມຢູ່ແຂວງຫຼວງນໍ້າທາ ໃນລະຫວ່າງ ວັນທີ 17-23 ກຸມພາ 2019. ຈຸດປະສົງຂອງການລົງຕິດຕາມກວດກາແມ່ນເພື່ອຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ວ່າມີ ຈຸດດີ ແລະ ຈຸດອ່ອນ ຄືແນວໃດ ຄຽງຄູ່ກັບນີ້ ກໍ່ປັບປຸງແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ ແລະ ສົ່ງເສີມຈຸດດີ ເພື່ອເຮັດໃຫ້ໂຄງການຕ່າງໆທີ່ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ ໄດ້ຖືກຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ປະສົບຜົນສຳເລັດຕາມແຜນການ ແລະ ເປົ້າໝາຍທີ່ໄດ້ວາງໄວ້ ໂດຍເນັ້ນໜັກໃສ່ວຽກງານຫຼາຍດ້ານເຊັ່ນ: ການເງິນ, ການຈັດຊື້, ການຈັດຕັ້ງປະຕິບັດວຽກງານ, ການລາຍງານ ແລະ ການຕີລາຄາຜົນໄດ້ຮັບ.

## II. ສະຖານທີ່ລົງປະຕິບັດວຽກງານ

ສະຖານທີ່ ທີ່ໄດ້ລົງຕິດຕາມກວດກາ ໃນຄັ້ງນີ້ ມີຄື:

1. ພະແນກສາທາລະນະສຸກແຂວງຫຼວງນໍ້າທາ;
2. ໂຮງໝໍແຂວງ (ໜ່ວຍງານວັນນະໂຣກ ແລະ ເອດ);
3. ຫ້ອງການສາທາລະນະສຸກເມືອງລອງ;
4. ສຸກສາລາຊຽງກົກ;
5. ສຸກສາລາບ້ານຫາດ;
6. ຫ້ອງການສາທາລະນະສຸກເມືອງສິງ;
7. ສຸກສາລາກິກມ່ວງ;
8. ສຸກສາລານໍ້າດ້າຍ.

## III. ພາກສ່ວນທີ່ໄດ້ເຂົ້າຮ່ວມການລົງຕິດຕາມກວດກາວຽກງານ

ຄະນະກຳມະການຕິດຕາມກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ເຂົ້າຮ່ວມການຕິດຕາມກວດກາໃນຄັ້ງນີ້ ມີຄື:

1. ທ່ານຮອງລັດຖະມົນຕີກະຊວງສາທາລະນະສຸກ ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ;
2. ຕາງໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ;
3. ຕາງໜ້າກົມພັດທະນາການບໍລິຫານລັດ, ກະຊວງພາຍໃນ;
4. ຕາງໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ;
5. ສະມາຊິກ CCM ລວມທັງ CSO;
6. ຫົວໜ້າສູນຕ້ານເອດ ແລະ ພຕພ, ກະຊວງສາທາລະນະສຸກ;
7. ຫົວໜ້າສູນວັນນະໂຣກ, ກະຊວງສາທາລະນະສຸກ;
8. ຕາງໜ້າສູນໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້;
9. ຕາງໜ້າໜ່ວຍງານບໍລິຫານໂຄງການກອງທຶນໂລກ (PR PMU);
10. ຕາງໜ້າກອງເລຂາ CCM.

## IV. ສະຫຼຸບຜົນໄດ້ຮັບຈາກການຕິດຕາມກວດກາ

ທີມງານຕິດຕາມກວດກາ ໄດ້ສະຫຼຸບ ຜົນສຳເລັດ, ບັນຫາທີ່ພົບເຫັນ ແລະ ຂໍ້ສະເໜີແນະນຳ ໃຫ້ປັບປຸງແກ້ໄຂບັນຫາທີ່ພົວພັນເຖິງໂຄງການຂອງສາມພະຍາດດັ່ງກ່າວ ເພື່ອປັບປຸງການຈັດຕັ້ງປະຕິບັດວຽກງານໃນຂັ້ນຕໍ່ໄປ (ກະລຸນາເບິ່ງຕາຕະລາງລຸ່ມນີ້).

| |
|---|
| **1. ຈຸດດີ/ ຜົນສຳເລັດ** |
| **ໂດຍລວມ:**<br>1. ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ ແລະ ລັດຖະບານລາວ ໃນການຈັດຕັ້ງປະຕິບັດກິດຈະກຳຫຼັກຂອງໂຄງການແຕ່ຂັ້ນແຂວງຮອດຂັ້ນທ້ອງຖິ່ນ;<br>2. ການນຳຂັ້ນແຂວງ ແລະ ເມືອງ ໄດ້ເອົາໃຈໃສ່ຊີ້ນຳຢ່າງໃກ້ຊິດ ເຮັດໃຫ້ການດຳເນີນໂຄງການປະສົບຜົນສຳເລັດ;<br>3. ພະນັກງານແຕ່ຂັ້ນແຂວງຮອດສຸກສາລາໄດ້ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດເປັນຢ່າງດີ.<br><br>**ໂຄງການຕ້ານເອດ:**<br>1. ມີຄະນະກຳມະການຕ້ານເອດຂັ້ນແຂວງ ແລະ ຂັ້ນເມືອງ;<br>2. ສາມາດໃຫ້ຄຳປຶກສາ ແລະ ກວດເລືອດ ເພື່ອຊອກຫາການຕິດເຊື້ອ HIV ທີ່ຂັ້ນແຂວງ ແລະ ໃນທຸກໆເມືອງ;<br>3. ມີຄົນເຈັບມາໃຊ້ບໍລິການ ການໃຫ້ຄຳປຶກສາ, ການກວດເລືອດ ແລະ ປິ່ນປົວ ເພີ່ມຂຶ້ນ ເຖິງແມ້ວ່າໂຄງການບໍ່ມີງົບປະມານໃນການເຄື່ອນໄຫວດ້ານກິດຈະກຳ;<br>4. ວຽກງານປ້ອງກັນ ແລະ ຕ້ານເຊື້ອເຮສໄອວີ/ ພະຍາດເອດ ໄດ້ຮັບຄວາມຮ່ວມມືຈາກຫຼາຍພາກສ່ວນ ເຊັ່ນ: ພາກລັດ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ;<br>5. ເຖິງວ່າຈະບໍ່ມີງົບປະມານໃນການຝຶກອົບຮົມ ແຕ່ທາງທີມງານເມືອງ ກໍ່ໄດ້ແນະນຳກັບທີ່ໃຫ້ແກ່ສຸກສາລາໃນເວລາລົງຕິດຕາມຊຸກຍູ້;<br>6. ຂັ້ນແຂວງ ແລະ ເມືອງ ໄດ້ນຳໃຊ້ລະບົບ DHIS2 ເພື່ອລາຍງານກ່ຽວກັບຂໍ້ມູນ HIV. |

**ໂຄງການຄວບຄຸມວັນນະໂຣກ:**

1. ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ ແລະ ລັດຖະບານ ໃນການຈັດຕັ້ງປະຕິບັດກິດຈະກຳທີ່ສຳຄັນຂອງໂຄງການແຕ່ຂັ້ນແຂວງຮອດສຸກສາລາ;
2. ໂດຍລວມແລ້ວ ບົດລາຍງານແມ່ນໄດ້ສົ່ງທັນເວລາ;
3. ຂັ້ນໂຮງໝໍແຂວງມີເຄື່ອງ GeneXpert ເພື່ອບົ່ງມະຕິວັນນະໂລກໄວຂຶ້ນ ແລະ ໄດ້ຮັບຜົນຊັດເຈນ;
4. ມີຕາໜ່າງການໃຫ້ບໍລິການ ແຕ່ຂັ້ນສຸກສາລາຮອດຂັ້ນແຂວງ;
5. ການປະຕິບັດກິດຈະກຳສ່ວນໃຫຍ່ບັນລຸຄາດໝາຍຕາມແຜນ ແລະ ຕົວຊີ້ວັດທີ່ວາງໄວ້;
6. ພະນັກງານມີຄວາມສາມັກຄີ ແລະ ມີຄວາມຮັບຜິດຊອບຕໍ່ວຽກງານ ແຕ່ຂັ້ນສຸກສາລາຈົນຮອດຂັ້ນແຂວງ;
7. ໄດ້ນຳໃຊ້ DHIS2 ເພື່ອລາຍງານກ່ຽວກັບວັນນະໂລກນັບແຕ່ຂັ້ນເມືອງ, ຂັ້ນແຂວງຕະຫຼອດຮອດສູນກາງ.
8. ສະຖານທີ່ບໍລິການໄດ້ມີການປັບປຸງ ໂດຍສະເພາະແມ່ນຕຶກນອນຄົນເຈັບຢູ່ໂຮງໝໍເມືອງລອງ, ບ່ອນເຮັດວຽກຂອງຜູ້ປະສານງານວັນນະໂລກຂັ້ນເມືອງ ຂອງເມືອງສິງໄດ້ຮັບການປັບປຸງ.

**ໂຄງການໄຂ້ຍຸງ:**

1. ໄດ້ມີການຝຶກອົບຮົມກ່ຽວກັບການເຝົ້າລະວັງໄຂ້ມະລາເຣຍ, ການປິ່ນປົວກໍລະນີ ແລະ ການຄວບຄຸມພາຫະນາເຊື້ອໃນຂັ້ນແຂວງ, ຂັ້ນເມືອງ ແລະ ສຸກສາລາ;
2. ມີຕາໜ່າງການຄວບຄຸມໄຂ້ຍຸງ ແຕ່ຂັ້ນບ້ານ, ຂັ້ນສຸກສາລາ, ຂັ້ນເມືອງ ຮອດຂັ້ນແຂວງ;
3. ອັດຕາການຕິດເຊື້ອພະຍາດໄຂ້ຍຸງໄດ້ຫຼຸດລົງໃນທົ່ວແຂວງ;
4. ໄດ້ນຳໃຊ້ DHIS2 ເພື່ອລາຍງານກ່ຽວກັບມະລາເຣຍນັບແຕ່ຂັ້ນເມືອງ, ແຂວງ ຕະຫຼອດຮອດສູນກາງ;
5. ຂັ້ນແຂວງ, ຂັ້ນເມືອງ ແລະ ສຸກສາລາ ແມ່ນມີເຈ້ຍຈຸ່ມກວດເລືອດ ແລະ ບໍ່ມີຢາຂາດສາງ;
6. ໄດ້ແຈກຢາຍມຸ້ງເຖິງບ້ານເປົ້າໝາຍ.

## 2. ຈຸດອ່ອນ/ຂໍ້ຫຍຸ້ງຍາກ

**ໂດຍລວມ**

1. ການຈັດຕັ້ງປະຕິບັດບາງກິດຈະກຳຊັກຊ້າ ຍ້ອນ ໄດ້ຮັບງົບປະມານຊັກຊ້າ, ເສັ້ນທາງຄົມມະນາຄົມ ແລະ ການສື່ສານດ້ານພາສາ ມີຄວາມຫຍຸ້ງຍາກ;
2. ງົບປະມານຍັງມີຈຳກັດ ແລະ ບໍ່ພຽງພໍໃນການຕອບສະໜອງເຂົ້າໃນການເຄື່ອນໄຫວກິດຈະກຳໄປເຖິງເຂດຫ່າງໄກສອກຫຼີກ;
3. ອຸປະກອນຮັບໃຊ້ເກົ່າແກ່ຫຼາຍ ແລະ ພາຫະນາຮັບໃຊ້ຂອງບາງໂຄງການບໍ່ພຽງພໍ ເຊັ່ນ ລົດພະຍາບານບໍ່ສາມາດໄປຮັບຄົນເຈັບຢູ່ເຂດພູສູງໄດ້;
4. ພະນັກງານບໍ່ພຽງພໍ ແຕ່ຂັ້ນສຸກສາລາ ຮອດ ຂັ້ນແຂວງ.

**ໂຄງການຕ້ານເອດ:**

1. ງົບປະມານໃນການເຄື່ອນໄຫວວຽກງານຕ້ານເອດຍັງມີຈຳກັດ ໂດຍສະເພາະວຽກງານໂຄສະນາເຜີຍແຜ່, ປ້ອງກັນ ແລະ ຕິດຕາມ;
2. ບໍ່ມີກິດຈະກຳປ້ອງກັນ ແລະ ຕ້ານເອດຢູ່ເຂດການກໍ່ສ້າງທາງລົດໄຟ, ເຂດຊາຍແດນ ແລະ ແຮງງານເຄື່ອນຍ້າຍ;
3. ການປະສານງານລະຫວ່າງຄະນະກຳມະການຕ້ານເອດ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ ຍັງບໍ່ທັນໄດ້ດີເທົ່າທີ່ຄວນເຊັ່ນ ການແລກປ່ຽນຂໍ້ມູນ ແລະ ການສະຫລຸບລາຍງານ;
4. ນ້ຳຢາກວດເລືອດເພື່ອຊອກຫາເຊື້ອເຮສໄອວີ ຍັງບໍ່ພຽງພໍ;
5. ການຕິດເຊື້ອ ເຮສໄອວີແມ່ນມີທ່າອ່ຽງເພີ່ມຂຶ້ນ, ພະຍາດຕິດຕໍ່ທາງເພດສຳພັນຍັງພົບເຫັນຫຼາຍ ແລະ ການກວດເລືອດຊອກຫາການຕິດເຊື້ອເຮສໄອວີໃນຜູ້ທີ່ເປັນ ພຕພ ຍັງບໍ່ທັນໄດ້ກວດຫຼາຍ;

6. ພະນັກງານບໍ່ພຽງພໍ ແລະ ຄວາມຮູ້ຄວາມສາມາດຍັງຈຳກັດ;
7. ຄວາມຮູ້ຄວາມເຂົ້າໃຈກ່ຽວກັບ HIV/AIDS ຂອງ ຊຸມຊົນ ແລະ ບຸກຄົນ ລວມທັງ ພະນັກງານແພດໝໍ ແມ່ນຍັງບໍ່ທັນສູງ.

**ໂຄງການຄວບຄຸມວັນນະໂຣກ:**

1. ການສື່ສານກັບຄົນເຈັບໂດຍສະເພາະຄົນເຈັບຊົນເຜົ່າ  ແມ່ນມີຄວາມຫຍຸ້ງຍາກ;
2. ຂາດການຮ່ວມມືກັບປະຊາຊົນ ເພາະສ່ວນໃຫຍ່ເປັນຄົນຊົນເຜົ່າ ແລະ ຖືຮີດຄອງປະເພນີ;
3. ການຊອກຄົ້ນຫາກໍລະນີສົງໃສວັນນະໂລກໃນເດັກຍັງຕ່ຳ;
4. ຍັງບໍ່ມີຕົວເລກລາຍງານການຊອກຄົ້ນວັນນະໂລກຂອງຄູ່ຮ່ວມງານໂດຍຜ່ານການລົງສຸຂະສຶກສາ;
5. ການຄຸ້ມຄອງຄົນເຈັບຍັງບໍ່ທັນໄດ້ດີ ຊຶ່ງສະແດງອອກຍັງມີຄົນເຈັບຈຳນວນໜຶ່ງບໍ່ໃຫ້ການຮ່ວມມືໃນການປິ່ນປົວໂດຍກິນຢາໄປໄດ້ໄລຍະໜຶ່ງແລ້ວກໍ່ຫາຍໄປ ລວມທັງຜູ້ທີ່ຍ້າຍໄປເຮັດວຽກຢູ່ບ່ອນອື່ນ ຊຶ່ງເຮັດໃຫ້ການປິ່ນປົວບໍ່ສຳເລັດຕາມຄາດ ໝາຍທີ່ວາງໄວ້ ແລ້ວເຮັດໃຫ້ຄົນເຈັບວັນນະໂລກດື້ຢາເພີ່ມຂຶ້ນ;
6. ການປະຕິບັດ DOT ຢູ່ຂັ້ນສຸກສາລາ ຍັງບໍ່ໄດ້ດີເທົ່າທີ່ຄວນ ເນື່ອງຈາກວ່າ ຄົນເຈັບໄດ້ຢູ່ເຂດຫ່າງໄກສອກຫຼີກ;
7. ຂາດນ້ຳຢາກວດເລືອດເພື່ອຊອກຫາເຊື້ອເອສໄອວີ ແລະ ຢາປ້ອງກັນວັນນະໂລກ;
8. ການກວດຫາການຕິດເຊື້ອເອສໄອວີໃນຄົນເຈັບວັນນະໂລກຍັງບໍ່ໄດ້ຮ້ອຍເປີເຊັນ;
9. ງົບປະມານຍັງບໍ່ພຽງພໍໃນການຈັດຕັ້ງປະຕິບັດກິດຈະກຳທີ່ເປັນບຸລິມະສິດຂອງວຽກງານວັນນະໂລກ.

**ໂຄງການໄຂ້ຍຸງ:**

1. ພະນັກງານໃນບາງເມືອງໄດ້ມີການສັບປ່ຽນໜ້າທີ່ຢູ່ເລື້ອຍໆ ແລະ ຜູ້ມາຮັບຜິດຊອບວຽກໃໝ່ ແມ່ນຍັງບໍ່ໄດ້ຮັບການຝຶກອົບຮົມ;
2. ການສົ່ງບົດລາຍງານ ແລະ ຂໍ້ມູນ ຂອງບາງເມືອງຍັງຊັກຊ້າ ຍ້ອນວ່າສັນຍານອິນເຕີເນັດມີບັນຫາ;
3. ບໍ່ມີງົບປະມານຮ່ວງລົງຕິດຕາມຊຸກຍູ້ ບັນດາຮ້ານຂາຍຢາ ແລະ ຫ້ອງກວດພະຍາດ;
4. ບໍ່ສາມາດເກັບກຳຈຳນວນປະຊາກອນເຄື່ອນຍ້າຍໄດ້.

## 3. ຂໍ້ສະເໜີຈາກທ້ອງຖິ່ນ

1. ຂໍພະນັກງານເພີ່ມໃຫ້ແກ່ຂັ້ນແຂວງ, ເມືອງ ແລະ ສຸກສາລາ;
2. ຂໍທຶນສະໜັບສະໜູນເພີ່ມໃຫ້ທັງ 3 ໂຄງການ ແຕ່ຂັ້ນແຂວງຮອດສຸກສາລາ;
3. ຊ່ວຍສ້າງສື່ໂຄສະນາສຸຂະສຶກສາ ທາງວິທະຍຸ ແລະ ໂທລະທັດ ເປັນພາສາຊົນເຜົ່າອາຄາ ແລະ ກຶມ;
4. ຂໍເພີ່ມງົບປະມານ ໃນການລົງຕິດຕາມຊຸກຍູ້ວຽກງານຂອງໂຄງການສາມພະຍາດ ໃຫ້ຂັ້ນແຂວງ, ເມືອງ ແລະ ສຸກສາລາ;
5. ຕອບສະໜອງນ້ຳຢາກວດເລືອດຊອກຫາການຕິດເຊື້ອເອສໄອວີ ແລະ ຢາປ້ອງກັນວັນນະໂລກ ໃຫ້ພຽງພໍ;
6. ຂໍງົບປະມານໃນການສ້າງເຮືອນນອນປິ່ນປົວພະຍາດວັນນະໂລກຕື່ມອີກ ສາມແຫ່ງ ທີ່ ໂຮງໝໍແຂວງ, ໂຮງໝໍເມືອງສິງ ແລະ ໂຮງໝໍເມືອງນາແລ;
7. ໄຂ້ຍຸງ: ຂໍງົບປະມານໃນການຝຶກອົບຮົມໃຫ້ຮ້ານຂາຍຢາ ແລະ ຫ້ອງກວດພະຍາດຄືນໃໝ່.

## 4. ຂໍ້ແນະນຳຈາກທີມງານກວດກາ/ ວິທີການແກ້ໄຂ

**ໂດຍລວມ:**

1. ຕໍ່ກັບບັນຫາບຸກຄະລາກອນ: ສະເໜີໃຫ້ທາງແຂວງ ແລະ ເມືອງ ເຊື່ອມສານວຽກງານ,  ບຸກຄະລາກອນ ແລະ ງົບປະມານ ເຂົ້າກັນ ໂດຍພະນັກງານໜຶ່ງທ່ານໃຫ້ຮັບຜິດຊອບຫຼາຍໜ້າທີ່ ແລະ ໃຫ້ຝຶກອົບຮົມໃຫ້ພະນັກງານຜູ້ທີ່ເຫັນວ່າຍັງຂາດຄວາມຮູ້ສະເພາະດ້ານ;
2. ຂັ້ນແຂວງຄວນຕອບສະໜອງງົບປະມານໃນການຝຶກອົບຮົມ ແລະ ການລົງຕິດຕາມຊຸກຍູ້ຕາໜ່າງໂຄງການ ໂດຍສະເພາະແມ່ນງົບປະມານຈາກພາກລັດເອົາ ເນື່ອງຈາກວ່າງົບປະມານຈາກກອງທຶນໂລກແມ່ນມີຈຳກັດ;

3. ແຂວງ ແລະ ເມືອງ ຄວນຂຶ້ນແຜນໄວ້ ກ່ຽວກັບບັນດາກິດຈະກຳທີ່ເປັນບຸລິມະສິດ ແລະ ງົບປະມານ ທີ່ຕ້ອງການຈັດຕັ້ງປະຕິບັດຂອງໂຄງການສາມພະຍາດ;
4. ສະເໜີໃຫ້ຂັ້ນແຂວງ ແລະ ເມືອງ ເກັບກຳຕົວເລກປະຊາກອນເຄື່ອນຍ້າຍ ນຳຂະແໜງການທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນພື້ນຖານໃນການລົງຊອກຄົ້ນກັບທີ່ໃນກຸ່ມດັ່ງກ່າວ;
5. ສະເໜີໃຫ້ເມືອງ ແລະ ສຸກສາ ຂຶ້ນແຜນກິດຈະກຳຮ່ວມກັນ;
6. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄວນເຮັດວຽກຮ່ວມກັບກະຊວງສາທາລະນະສຸກ ແລະ IOM ໃນການເກັບກຳຂໍ້ມູນກ່ຽວກັບສະພາບປະຊາກອນເຄື່ອນຍ້າຍ ເພື່ອຊ່ວຍກະຊວງສາທາລະນະສຸກ ກໍ່ຄືພະແນກສາທາລະນະສຸກແຂວງຫຼວງນ້ຳທາ ສາມາດວາງແຜນກິດຈະກຳໃຫ້ມີປະສິດທິຜົນ.

**ໂຄງການຕ້ານເອດ:**

1. ສະເໜີໃຫ້ຂັ້ນແຂວງ ແລະ ເມືອງ ເອົາໃຈໃສ່ໃນການກວດເລືອດຊອກຫາການຕິດເຊື້ອ HIV ໃຫ້ໄດ້ຫຼາຍຂຶ້ນກວ່າເກົ່າເພື່ອບັນລຸຄາດໝາຍທີ່ວາງໄວ້ ໂດຍສະເພາະແມ່ນການເຂົ້າເຖິງປະຊາກອນເຄື່ອນຍ້າຍທີ່ມາເຮັດວຽກໂຄງການກໍ່ສ້າງທາງລົດໄຟ, ສວນຢາງ, ສວນກ້ວຍ ແລະ ອື່ນໆ.

**ໂຄງການຄວບຄຸມວັນນະໂລກ:**

1. ໃຫ້ຈັດຕັ້ງປະຕິບັດກິດຈະກຳຂອງໂຄງການໃຫ້ທັນເວລາ ໂດຍສະເພາະແມ່ນເງິນນຳສົ່ງຕົວຢ່າງຂີ້ກະເທີ່ ເພື່ອເຮັດໃຫ້ການກັ່ນຕອງໃຫ້ໄດ້ຫຼາຍຂຶ້ນຕາມຄາດໝາຍທີ່ວາງໄວ້;
2. ເພີ່ມທະວີການກັ່ນຕອງກໍລະນີຄົນເຈັບວັນນະໂລກໃນເດັກນ້ອຍ, ຜູ້ໃຫຍ່, ປະຊາກອນເຄື່ອນຍ້າຍ, ຜູ້ທີ່ຢູ່ໃກ້ສິດກັບຄົນເຈັບວັນນະໂຣກ ແລະ ກຸ່ມທີ່ມີຄວາມສ່ຽງສູງ ດ້ວຍການໃຫ້ສຸຂະສຶກສາ ແລະ ການກັ່ນຕອງວັນນະໂລກກັບທີ (ACF);
3. ສະເໜີໃຫ້ທາງ ແຂວງ, ເມືອງ ແລະ ບ້ານ ເອົາໃຈໃສ່ ແລະ ຊ່ວຍອະທິບາຍໃຫ້ຄົນເຈັບຜູ້ທີ່ປະຕິເສດການປິ່ນປົວວັນນະໂລກ ໂດຍສະເພາະແມ່ນໂອ້ລົມກັບບຸກຄົນສຳຄັນໃນຄອບຄົວໃຫ້ເຂົ້າໃຈ;
4. ເພີ່ມທະວີການນຳສົ່ງຂີ້ກະເທີ່ຈາກສຸກສາລາມາຫາເມືອງ ເພື່ອບົ່ງມະຕິໃຫ້ໄດ້ຫຼາຍກວ່າເກົ່າ;
5. ສະເໜີໃຫ້ອຳນາດການປົກຄອງເມືອງ ແລະ ບ້ານ ຊ່ວຍລະດົມໃຫ້ຄົນເຈັບວັນນະໂລກດື່ມຢາ ໃຫ້ເຂົ້າເຖິງການປິ່ນປົວຈົນຄົບກຳນົດ;
6. ຂໍສະເໜີໃຫ້ພິຈາລະນາເອົາແຂວງຫຼວງນ້ຳທາເຂົ້າເປັນເຂດພື້ນທີ່ໃນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການພາກພື້ນສຳລັບແຜນງານວັນນະໂລກ ເນື່ອງຈາກວ່າ ແຂວງຫຼວງນ້ຳທາເປັນແຂວງທີ່ມີປະຊາກອນເຄື່ອນຍ້າຍຫຼາຍ.

**ໂຄງການໄຂ້ຍຸງ:**

1. ສະເໜີໃຫ້ຂັ້ນແຂວງ ແລະ ເມືອງ ເອົາໃຈໃສ່ໃນການກວດເລືອດຊອກຫາການຕິດເຊື້ອ Malaria ໃຫ້ໄດ້ຫຼາຍຂຶ້ນກວ່າເກົ່າເພື່ອບັນລຸຄາດໝາຍທີ່ວາງໄວ້ ໂດຍສະເພາະແມ່ນການເຂົ້າເຖິງປະຊາກອນເຄື່ອນຍ້າຍທີ່ມາເຮັດວຽກໂຄງການກໍ່ສ້າງທາງລົດໄຟ, ສວນຢາງ, ສວນກ້ວຍ ແລະ ອື່ນໆ;
2. ໃຫ້ຂັ້ນແຂວງ ແລະ ເມືອງ ເອົາໃຈໃສ່ການເຝົ້າລະວັງພະຍາດໄຂ້ຍຸງຢູ່ແຕ່ລະຂັ້ນ ຖ້າພົບເຊື້ອໃຫ້ປະຕິບັດການຕອບໂຕ້ແບບ 1-3-7 ໃຫ້ທັນເວລາ.

ທີມງານຕິດຕາມກວດກາ ຂອງຄະນະກຳມະການປະສານງານກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈ ມາຍັງຄະນະຊີ້ນຳຂອງພະແນກສາທາລະນະສຸກແຂວງຫຼວງນ້ຳທາ, ໂຮງໝໍແຂວງ ( ໜ່ວຍງານວັນນະໂລກ ແລະ ເອດ), ຫ້ອງການສາທາລະນະສຸກເມືອງລອງ, ສຸກສາລາຊຽງກົກ, ສຸກສາລາບ້ານທາດ,

ຫ້ອງການສາທາລະນະສຸກເມືອງສິງ, ສຸກສາລາກິກມ່ວງ ແລະ ສຸກສາລານໍ້າດ້າຍ ພ້ອມດ້ວຍພະນັກງານທຸກໆທ່ານ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ໄດ້ໃຫ້ການຮ່ວມມືເປັນຢ່າງດີ ຈົນເຮັດໃຫ້ວຽກງານການຕິດຕາມຊຸກຍູ້ໃນຄັ້ງນີ້ໄດ້ປະສົບຜົນສໍາເລັດຕາມແຜນການທີ່ວາງໄວ້.

**ຫົວໜ້າທີມງານລົງຕິດຕາມວຽກງານ**

ທ່ານ ຮສ. ດຣ. ພູທອນ ເມືອງປາກ
ຮອງລັດຖະມົນຕີກະຊວງສາທາລະນະສຸກ
ທັງເປັນປະທານ CCM

**ຜູ້ສະຫລຸບສັງລວມ**

ທ່ານ ໜູກອນ ທະລັງສີ
ຜູ້ປະສານງານ ແລະ ການເງິນ
ກອງເລຂາ CCM

ຮູບພາບຂອງການລົງຕິດຕາມຊຸກຍູ້:

ກອງປະຊຸມຮ່ວມກັບພະແນກສາທາລະນະສຸກ ແລະ ໂຮງໝໍແຂວງຫຼວງນ້ຳທາ



ກອງປະຊຸມສະຫຼຸບຖອດຖອນບົດຮຽນກັບພະແນກສາທາລະນະສຸກ ແລະ ໂຮງໝໍແຂວງຫຼວງນ້ຳທາ



ປະຊຸມຮ່ວມກັບ ຫ້ອງການສາທາລະນະສຸກເມືອງລອງ ແລະ ສຸກສາລາຊຽງກົກ



ຢ້ຽມຢາມໂຮງໝໍເມືອງລອງ



ຢ້ຽມຢາມສຸກສາລາບ້ານທາດ (ເຂດເມືອງນັງ)



ກອງປະຊຸມຮ່ວມກັບຫ້ອງການສາທາລະນະສຸເມືອງສິງ,
ສຸກສາລາກົກມ່ວງ ແລະ ສຸກສາລານ້ຳດ້າຍ



